**<u>ແຜນການສອນ</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 14 ກຸມພາ 2009 (02-14-2010)**

---

## <u>ຈະເຮັດວິທີໃດຈຶ່ງຈະປ່ຽນໃຈທ່ານໄດ້?:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (ຟີລິບປອຍ 3:2-15; 4:8)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ເຈາະຈົງໃສ່ວ່າຈະເຮັດແນວໃດຈຶ່ງຈະເຕີບໃຫຍ່ໃນດ້ານຄວາມສັມພັນກັບພຣະຄຣິດ ປ່ຽນແປງຄຸນຄ່າ ແລະທາງຄວາມຄິດຂອງບຸກຄົນ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>**

ໃນປີ 2007, ພວກທີ່ຄົ້ນຄວ້າຈັດທຳປຶ້ມ ໄລຟ໌ເວ ໄດ້ສຳຣວດຜູ້ໃຫຍ່ຊາວອະເມຣິກັນ ທີ່ຢູ່ໃນກຸ່ມໂປຣແທສຕັງ ທີ່ໄດ້ໄປວິຫານເດືອນລະຄັ້ງ ຫລືຫລາຍກວ່ານັ້ນມີຈຳນວນ 2,500 ຄົນ. ມີແຕ່ 36% ຕອບມາວ່າ "ຂ້າພະເຈົ້າຂໍຕອບຕົງໆວ່າ ໄດ້ພຍາຍາມຍົກເອົາພຣະເຈົ້າເປັນນ້ຳເບີນຶ່ງໃນຊີວິດ" ບົດຮຽນນີ້ສຳຄັນຫລາຍ ເພາະວ່າ ການທີ່ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນນັ້ນຄວນເປັນເປົ້າໝາຍສຳລັບຄຣິສຕຽນທຸກໆຄົນ. ຄວາມຮູ້ສຶກກັບການຮູ້ຈັກພຣະເຈົ້າໃຫດີຂຶ້ນນີ້ ຄວນສະທ້ອນເຖິງການເຫັນຄຸນຄ່າ, ສິ່ງສຳຄັນໃນຊີວິດ, ແນ່ນອນແມ່ນການໃຊ້ຄວາມຄິດຂອງພວກເຮົາ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານຈັດວາງຄຸນຄ່າຂອງການຮູ້ຈັກພຣະຄຣິດສູງກວ່າທຸກສິ່ງ ແລະອຸທິດຕົນ ແລະສແວງຫາວິຖີທາງຂອງຄວາມນຶກຄິດທີ່ຈະພາໃຫ້ເກີດການເຕີບໂຕຝ່າຍວິນຍານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

-

ບົດຮຽນນີ້ຈະຊ່ອຍພວກເຮົາເຕີບໂຕຊຶ່ງໝາຍຄວາມວ່າ ປ່ຽນແປງ ແລະການເຕີບໃຫຍ່ໃນພຣະຄຣິດ ມາຍຄວາມວ່າການປ່ຽນແປງຄຸນຄ່າ ແລະແນວທາງຄວາມຄິດຂອງພວກເຮົາ.

- **1.<u>ຢ່າອາສັຍປະຫວັດຊີວິດອັນດີຂອງຕົນເອງ:</u>** (ຟີລິບປອຍ 3:2-6)
- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 3:2-
- ໃຫ້ນັກຮຽນຜູ້ນຶ່ງອສາສມັກອ່ານພຣະທັມຟີລິບປອຍ 3:2 ຊຶ່ງມີສາມກຸ່ມອັນຕະລາຍທີ່ໄດ້ທຳລາຍຄວາມເຊື່ອຂອງຄົນຟີລິບປອຍ.
- ໃຫ້ຜູ້ນຶ່ງອ່ານ ຟີລິບປອຍ 3:3 ຊຶ່ງໂປໂລເວົ້າເຖິງຜູ້ທີ່ເຊື່ອແທ້ຈິງໄດ້ປະຕິເສດການຖືຮີດຄອງປະເພນີ ຈິດຈໍ່ຢູ່ທີ່ການງານແຫ່ງຄວາມຈິງຂອງພຣະເຈົ້າ.
- ໃຫ້ຜູ້ນຶ່ງອ່ານຟີລິບປອຍ 3:4-6. ແລ້ວໃຫ້ນັກຮຽນຊອກຫາເນື້ອຫາສາຣະຜົນສລຸບທາງຝ່າຍຈິດວິນຍານທີ່ໂປໂລໄດ້ກ່າວໃນຂໍ້ທີ 4-6 ນັ້ນແລ້ວເອົາມາຂຽນໃສ່ກະດານ.
- ໜັງສືແນະນຳຂອງໂປໂລທັງເຈັດສະບັບນັ້ນຊີ້ບອກໃຫ້ຮູ້ເຖິງໃຈລາວທີ່ເຊື່ອໃນກົດບັນຍັດຂອງໂມເຊຢ່າງກາເຂັ້ມງວດ.
- ສຳລັບທ່ານເດ ທ່ານຈະຕອບສນອງຕໍ່ຄົນທີ່ຄົນໃນສະມາຊິກໃນກຸ່ມໃຫ້ສິດທິພິເສດເຂົາເຈົ້າມາເຖິງພຣະເຈົ້າແນວໃດ?
- ແຕ່ຫລັງຈາກໂປໂລທັບປ່ຽນ, ລາວກໍເລີ້ມມີຄວາມເຂົ້າໃຈ ແລະລາວກໍໄດ້ມີຄວາມສັມພັນກັບພຣະຄຣິດຊຶ່ງເຮັດໃຫ້ລາວມີຄວາມແຕກຕ່າງໃນຊີວິດຂອງລາວ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຟີລິບປອຍ 3:2-6)

1. ເປັນດ້ວຍເຫດໃດໂປໂລຈຶ່ງຊີ້ແຈງເຖິງເຣື່ອງຮີດຄອງປະເພນີຢ່າງຮຸນແຮງ?
2. ການສອນຜິດໃນທຸກມື້ນີ້ໄດ້ເຮັດໃຫ້ປະຕິເສດພຣະຄຸນຂອງພຣະເຈົ້າທີ່ເປັນຜູ້ໃຫ້ທົນທາງແຫ່ງຄວາມລອດພົ້ນໂດຍທາງດຽວເທົ່ານີ້ແນວໃດ?
3. ທ່ານຈະພັລນາເຖິງຄວາມເຊື່ອທີ່ແທ້ຈິງນີ້ໄດ້ຢ່າງໃດ?

**2. <u>ທຳຄວາມຮູ້ຈັກກັບພຣະເຢຊູ:</u>** (ຟີລິບປອຍ 3:7-9)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 3:7-9
- ຈິດໃຈຂອງທ່ານໄດ້ປ່ຽນແປງແນວໃດແດ່?
- ການແນະນຳຕົວ ແລະປະສົບການຂອງໂປໂລທີ່ບໍ່ປ່ຽນແປງ ແຕ່ວ່າໃນຂໍ້ທີ 7-9 ໄດ້ຊີ້ໃຫ້ເຫັນວ່າ ແມ່ນຫຍັງທີ່ໄດ້ປ່ຽນແປງໄປ.
- ພຣະທັມໄດ້ເຮັດໃຫ້ຈິດໃຈຂອງຄົນທັງຫລາຍປ່ຽນແປງໄດ້.
- ເຫດຜົນທີ່ເຮັດໃຫ້ຈິດໃຈ ຄວາມຄິດຂອງໂປໂລປ່ຽນແປງ ນັ້ນມີຢູ່ຂໍ້ໃດແດ່?
- ໃນເມື່ອເຂົາເຈົ້າເວົ້າວ່າ “ການຍອມຮັບສິ່ງທີ່ທ່ານຕ້ອງການ (ຫລືບັນຫາ) ເປັນຂັ້ນຕອນອັນດັບທີນຶ່ງ” ນັ້ນເຂົາເຈົ້າໝາຍຄວາມວ່າແນວໃດ? ອີງຕາມຂໍ້ທີ 9, ນັ້ນແມ່ນຫຍັງເປັນພື້ນຖານຕົ້ນຕໍຂອງພວກເຮົາທຸກຄົນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຟີລິບປອຍ 3:7-9)

1. ທີ່ທ່ານຮູ້ມັນແມ່ນບັນຫາອັນໃດທີ່ທ່ານໄດ້ຮູ້ຈັກຫລາຍກວ່າຜູ້ທີ່ທ່ານຮູ້ຈັກ?

2. ເປັນດ້ວຍເຫດໃດໂປໂລຈຶ່ງມອງເຫັນຄວາມສຳຄັນຈິດໃຈຂອງລາວ ແລະຄຸນນະສົມບັດຂອງລາວທີ່ໄດ້ປ່ຽນແປງ?
3. ແມ່ນສິ່ງໃດທີ່ໂປໂລໄດ້ເອົາມາແທນງານທີ່ດີຂອງລາວຫລາຍໆຢ່າງ?
4. ທ່ານໄດ້ຕັດສິນໃຈຢ່າງໃດ ຫລືບໍ່ແມ່ນຄຸນຄ່າທີ່ທ່ານໄດ້ຮູ້ຈັກພຣະເຢຊູເປັນພຣະຜູ້ເປັນເຈົ້າບໍ່?
5. ທ່ານຈະເຮັດແນວໃດເພື່ອໃຫ້ຮູ້ຈັກກັບພຣະເຢຊູຫລາຍຂຶ້ນກວ່າທີ່ຮູ້ຈັກພຣະອົງໃນມື້ວານນີ້?

## 3 . <u>ໂນ້ມຕົວໄປຫາແນວຄິດແບບຜູ້ໃຫຍ່:</u> (ຟີລິບປອຍ 3:10-15; 4:8)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຟີລິບປອຍ 3:10-15; 4:8
- ຈິດໃຈຂອງພວກເຮົາຈະຫງອຍເຫງົາ ໃນເມື່ອພວກເຮົາຫາກປ່ອຍປະລະເລີຍຊີວິດຄຣິສຕຽນຂອງພວກເຮົາ, ເຊັ່ນງານທີ່ດີໆຂອງພວກເຮົາ, ໃນຄວາມຄິດທີ່ໂງ່ຈ້າເຮັດໃຫ້ພວກເຮົາບໍ່ເຕີບໃຫຍ່ໃນພຣະຄຣິດ.
- ໃຫ້ນັກຮຽນຜູ້ນຶ່ງອ່ານຟີລິບປອຍ 3:10-12.
- ໂປໂລໄດ້ສະແດງໃຫ້ເຫັນເປົ້າໝາຍຂອງລາວ ແລ້ວກໍໃຫ້ສິລປະຄວາມຊຳນານຂອງລາວໄປເຖິງເປົ້າໝາຍ.
- ຟີລິບປອຍ 3:12-15 ທີ່ກ່ຽວພັນກັບຝ່າຍຮ່າງກາຍຕາມທີ່ໄດ້ອ່ານຂໍ້ພຣະທັມຕ່າງໆເຫລົ່ານີ້.
- ເປັນດ້ວຍເຫດໃດການບັງຄັບຈາກພາຍນອກຈຶ່ງບໍ່ສາມາດປ່ຽນແປງໄດ້ຢ່າງແທ້ຈິງ?
- ໃຫ້ນັກຮຽນຜູ້ນຶ່ງອ່ານຟີລິບປອຍ 4:8.
- ນາງຈູນມີຄວາມຊິນເຄີຍໃນການເວົ້າ "ແມ່ນຫຍັງກໍຕາມ ໃນເມື່ອລາວບໍ່ຮູ້ທີ່ຈະຄິດສິ່ງອື່ນ ຫລືຈະເວົ້າ. ລາວກັບເພື່ອນໄດ້ກັບຄືນໄປຫາໃນຄວາມຈົດຈຳຄວາມຊິນເຄີຍທີ່ພຣະທັມຟີລິບປອຍ 4:8 ແລະນີ້ເມື່ອໃດກໍຕາມເພື່ອການເວົ້າຂອງເຂົາເຈົ້າ "ຢ່າງໃດກໍຕາມ" ເຂົາເຈົ້າໄດ້ມີການສຳເຣັດໃນສິ່ງທີ່ອ້າງອີງໃນຂໍ້ນີ້ ແລະຄວາມຄິດຂອງເຂົາເຈົ້າກໍກັບໄປຈົດຈໍ່ຢູ່ສິ່ງທີ່ເປັນຝ່າຍຂອງພຣະເຈົ້າ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ຟີລິບປອຍ 3:10-15; 4:8

1. ບັນທັດຖານອັນໃດທີ່ທ່ານໃຊ້ໃນການວັດແທກ ໃນການບໍ່ຈະເຣີນເຕີບໂຕຂອງເດັກນ້ອຍ?
2. ເປົ້າໝາຍຂອງໂປໂລໃນຟີລິບປອຍ 3:10 ໃຊ້ໄດ້ສຳລັບຄົນສ່ວນຫລາຍບໍ່? ສຳລັບທ່ານເດ?
3. ທັງສອງຢ່າງຂອງການຕັດສິນໃຈ ແລະການຖ່ອມຕົວຂອງໂປໂລເປັນແນວໃດໃນຂໍ້11-15?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ເຖິງວ່າຄົນສ່ວນຫລາຍໃນສາສນາຜູ້ນັ້ນຕ້ອງເຂົ້າໃຈວ່າລາວບໍ່ສາມາດໄດ້ຄວາມພົ້ນມາຈາກວຽກງານຕ່າງໆ
- ແຕ່ຕ້ອງເຊື່ອໄວ້ວາງໃຈໃນພຣະຄຣິດວ່າເປັນພຣະຜູ້ຊ່ອຍໃຫ້ພົ້ນ ແລະເປັນອົງພຣະຜູ້ເປັນເຈົ້າ.
- ການທີ່ຮູ້ຈັກພຣະຄຣິດກໍກວ່າການມີຄຳແນະນຳເຣື່ອງຂອງພຣະອົງ. ການຮູ້ຈັກພຣະອົງໂດຍຄວາມເຊື່ອ ໂດຍການໄວ້ວາງໃຈວ່າພຣະອົງເປັນພຣະຜູ້ຊ່ອຍໃຫ້ລອດພົ້ນ ແລະເປັນອົງພຣະຜູ້ເປັນເຈົ້າ ສຳລັບຄວາມລອດພົ້ນ ແລະການຈະເຣີນຂຶ້ນໃນດ້ານຄວາມສັມພັນກັບພຣະອົງນັ້ນເປັນຂໍ້ອ້າງອີງທີ່ດີ.
- ບັນດາຜູ້ທີ່ເຊື່ອທັງຫລາຍຄວນຈະເຮັດໃຫ້ເປັນສິດທິພິເສດໃນການເຕີບໂຕ ແລະມີຄວາມໝາຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**